**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ...411..../ນຍ

ນະຄອນຫຼວງວຽງຈັນ, ວັນທີ..10../..11.../2016

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຍຸຕິທຳ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 848/ກຍ, ລົງວັນທີ 19 ກັນຍາ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 406/ພນ, ລົງວັນທີ 24 ຕຸລາ 2016.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງຍຸຕິທຳ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ ແລະ ພັດທະນາ ວຽກງານກົດໝາຍ ແລະ ຍຸຕິທຳ ໃນຂອບເຂດທົ່ວປະເທດ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງຍຸຕິທຳ ຂຽນເປັນຕົວອັກສອນຫຍໍ້ວ່າ “ກຍ” ແມ່ນກົງຈັກໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບ ການສ້າງ ແລະ ປັບປຸງກົດໝາຍ, ໂຄສະນາເຜີຍແຜ່ກົດໝາຍ, ສ້າງບຸກຄະລາກອນກົດໝາຍ, ການບໍລິການວຽກງານຍຸຕິທຳ, ການພົວພັນຮ່ວມມືກັບສາກົນທາງດ້ານກົດໝາຍ ແລະ ວຽກງານຍຸຕິທຳ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິຂອງລັດຖະບານ;
2. ຄົ້ນຄວ້າ, ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານກ່ຽວກັບວຽກງານກົດໝາຍ ແລະ ຍຸຕິທຳ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປາກົດຜົນເປັນຈິງ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຂອງຂະແໜງການຍຸຕິທຳເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
4. ຊຸກຍູ້ ແລະ ຊີ້ນຳທາງດ້ານວິຊາການໃຫ້ຂະແໜງການ ແລະ ພາກສ່ວນອື່ນ ໃນການສ້າງ, ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ; ເຂົ້າຮ່ວມປະກອບຄຳເຫັນ, ກວດກາຄວາມສອດຄ່ອງທາງດ້ານກົດໝາຍ ແລະ ປະເມີນຜົນກະທົບຂອງຮ່າງກົດໝາຍ ແລະ ນິຕິກຳຕ່າງໆທີ່ຂະແໜງອື່ນສະເໜີມາ;
5. ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍ, ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ການຈັດຕັ້ງອື່ນກ່ຽວກັບແຜນການ, ວິທີການໂຄສະນາເຜີຍແຜ່ກົດໝາຍ, ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃຫ້ແກ່ການຈັດຕັ້ງ ແລະ ພົນລະເມືອງ;
6. ຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃນຂອບເຂດທົ່ວປະເທດໃຫ້ມີປະສິດທິຜົນ ແລະ ເຂັ້ມງວດ; ຄົ້ນຄວ້າ, ແກ້ໄຂຄຳຮ້ອງ, ຄຳສະເໜີ ແລະ ຊີ້ນຳ, ຕິດຕາມ, ຊຸກຍູ້ດ້ານວິຊາການກ່ຽວກັບວຽກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
7. ຄຸ້ມຄອງ ແລະ ສົ່ງເສີມການເຄື່ອນໄຫວວຽກງານຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ, ການສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ; ຄຸ້ມຄອງວຽກງານສັນຊາດ, ທະບຽນຄອບຄົວ ແລະ ຍຸຕິທຳເດັກຕາມຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນຕາມທີ່ກຳນົດໄວ້ໃນກົດໝາຍ; ຄຸ້ມຄອງວຽກທະນາຍຄວາມ ແລະ ທີ່ປຶກສາກົດໝາຍ, ການຊ່ວຍເຫຼືອລ້າທາງດ້ານກົດໝາຍ ແລະ ອົງການຊ່ວຍໜູນວຽກງານຍຸຕິທຳອື່ນ;
8. ກວດກາ ແລະ ປະເມີນຜົນນິຕິກຳທີ່ປະກາດໃຊ້ແລ້ວ; ພ້ອມທັງສະເໜີຕໍ່ລັດຖະບານພິຈາລະນາປັບປຸງ, ດັດແກ້ກົດໝາຍ ແລະ ນິຕິກຳຕ່າງໆ ຂອງຂະແໜງການອື່ນທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຕົວຈິງ; ຄົ້ນຄວ້າໃຫ້ຄຳເຫັນທາງດ້ານກົດໝາຍຕໍ່ສັນຍາ ແລະ ຮ່າງສັນຍາທີ່ລັດຖະບານເປັນຄູ່ສັນຍາ, ເຂົ້າຮ່ວມເຈລະຈາສັນຍາ, ສົນທິສັນຍາດ້ານຍຸຕິທຳ ແລະ ເປັນໃຈກາງການປະສານງານໃນການຈັດຕັ້ງປະຕິບັດສົນທິສັນຍາຍຸຕິທຳ;
9. ສ້າງວິຊາຊີບຜູ້ພິພາກສາ, ໄອຍະການ, ທະນາຍຄວາມ ແລະ ວິຊາຊີບຍຸຕິທຳອື່ນ; ສ້າງນັກກົດໝາຍຊັ້ນຕ່າງໆ ພ້ອມທັງຝຶກອົບຮົມໄລຍະສັ້ນກ່ຽວກັບວຽກງານໃນຂະແໜງຍຸຕິທຳ; ຄົ້ນຄວ້າວິທະຍາສາດກົດໝາຍ ແລະ ວຽກຍຸຕິທຳ;
10. ຄຸ້ມຄອງໃຫ້ບໍລິການ ແລະ ຕິດຕາມການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ; ຊີ້ນຳການເຄື່ອນໄຫວວຽກງານທາງດ້ານວິຊາການຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ພະແນກຍຸຕິທຳແຂວງ, ນະຄອນຫຼວງ;
11. ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງດ້ານເຕັກນິກ, ວິຊາການໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາໃຫ້ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງຢ່າງລະອຽດ;

12. ຄົ້ນຄວ້າ, ກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນໆ; ຄຸ້ມຄອງ, ຊີ້ນຳ ແລະ ຕິດຕາມກວດກາການເຄື່ອນໄຫວທາງດ້ານວິຊາການກ່ຽວກັບວຽກງານທະບຽນສານຢູ່ຂັ້ນທ້ອງຖິ່ນ;
13. ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງຂອງຂະແໜງການຍຸຕິທຳ; ຄຸ້ມຄອງ, ກຳນົດຕຳແໜ່ງງານ, ສ້າງແຜນການບຳລຸງ, ກໍ່ສ້າງ, ສັບຊ້ອນ ພະນັກງານ-ລັດຖະກອນ ລວມທັງການສົ່ງເສີມບົດບາດ ຍິງ-ຊາຍ, ການປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງຍຸຕິທຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມລະບຽບທີ່ກຳນົດ;
14. ຕິດຕາມການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງພະນັກງານ-ລັດຖະກອນ ທີ່ຂຶ້ນກັບສິດຄຸ້ມຄອງ ຂອງຂະແໜງການຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນ ເພື່ອສະກັດກັ້ນປາກົດການລະເມີດມະຕິ, ຄຳສັ່ງ, ກົດລະບຽບ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ;
15. ຄຸ້ມຄອງ, ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ-ກວດການ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ລວມທັງນິຕິກຳທີ່ລັດຖະບານ ແລະ ກະຊວງຍຸຕິທຳວາງອອກແຕ່ລະໄລຍະ;
16. ພົວພັນຮ່ວມມືກັບຕ່າງປະເທດ, ເປັນໃຈກາງ ປະສານງານ, ແລກປ່ຽນບົດຮຽນທາງດ້ານກົດໝາຍ ແລະ ວຽກງານຍຸຕິທຳກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
17. ຄຸ້ມຄອງ, ບໍລິຫານການເງິນ, ຊັບສິນ ແລະ ເອກະສານຂອງກະຊວງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມການເຄື່ອນໄຫວວຽກງານບັນດາກົງຈັກຂອງກະຊວງເປັນແຕ່ລະໄລຍະ;
18. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ລັດຖະບານ, ກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນໃນທົ່ວຂະແໜງຍຸຕິທຳຕາມການແບ່ງຂັ້ນຄຸ້ມຄອງ;
2. ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງຢ່າງລະອຽດ;
3. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການຂອງຂະແໜງຍຸຕິທຳ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານ;
4. ແນະນຳ ແລະ ກຳນົດໝາຍເຕັກນິກ ເພື່ອຄຸ້ມຄອງມະຫາພາກ ວຽກງານກົດໝາຍ ແລະ ຍຸຕິທຳ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານຂະແໜງຍຸຕິທຳ; ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດຂອງກະຊວງຍຸຕິທຳ;
6. ອະນຸມັດໃຫ້ຫ້ອງການ, ບັນດາກົມ, ສູນ, ສະຖາບັນຈັດກອງປະຊຸມ, ຝຶກອົບຮົມ ຫຼື ສຳມະນາທາງດ້ານວິຊາການ;
7. ສະເໜີແຜນງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານຂອງກະຊວງຍຸຕິທຳ;
8. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດດ້ານກົດໝາຍ ແລະ ຍຸຕິທຳ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ;
9. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດເພື່ອພັດທະນາວຽກງານກົດໝາຍ, ຍຸຕິທຳ ແລະ ວຽກງານອື່ນໆ ຕາມການມອບໝາຍ ຫຼື ຕາມການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ, ລະບຽບການທີ່ກຳນົດໄວ້;

10. ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານໃນຂະແໜງຍຸຕິທຳ ໃຫ້ໄປຕາມລະບຽບ ແລະ ກົດໝາຍ ທີ່ກຳນົດ;
11. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກະຊວງຍຸຕິທຳປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມຮ່ວມມືສາກົນ;
5. ກົມກົດໝາຍ;
6. ກົມໂຄສະນາເຜີຍແຜ່ກົດໝາຍ;
7. ກົມສົ່ງເສີມລະບົບຍຸຕິທຳ;
8. ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
9. ກົມທະບຽນສານ;
10. ກົມກວດກາ ແລະ ປະເມີນຜົນນິຕິກຳ;
11. ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
12. ສະຖາບັນຍຸຕິທຳແຫ່ງຊາດ.

**ຫົວໜ່ວຍວິຊາການລະດັບສອງຂຶ້ນກັບກະຊວງປະກອບມີ:**

1. ສະຖາບັນຍຸຕິທຳພາກເໜືອ ແຂວງຫຼວງພະບາງ;
2. ສະຖາບັນຍຸຕິທຳພາກກາງ ແຂວງສະຫວັນນະເຂດ;
3. ສະຖາບັນຍຸຕິທຳພາກໃຕ້ ແຂວງຈຳປາສັກ.

**ກົງຈັກການຈັດຕັ້ງຂອງທ້ອງຖິ່ນຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກະຊວງຍຸຕິທຳມີຄື:**

1. ຂັ້ນແຂວງ ມີພະແນກຍຸຕິທຳ;
2. ຂັ້ນເມືອງ ມີຫ້ອງການຍຸຕິທຳ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກະຊວງຍຸຕິທຳ ປະກອບມີ:

**ກ. ຂັ້ນກະຊວງ**

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການທີ່ນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

ໃນເວລາຕິດຂັດລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີທ່ານໃດໜຶ່ງເປັນຜູ້ຮັກສາການແທນ.

2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.

3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

**ຂ. ພະແນກຍຸຕິທຳຂັ້ນແຂວງ ແລະ ຫ້ອງການຍຸຕິທຳຂັ້ນເມືອງ**

1. ຂັ້ນແຂວງ ມີຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ;
2. ຂັ້ນເມືອງ ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກະຊວງຍຸຕິທຳ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງກະຊວງຍຸຕິທຳ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂະແໜງ ຍຸຕິທຳ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

# ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງຍຸຕິທຳ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງຍຸຕິທຳ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ, ບັນດາຫົວໜ່ວຍກິຈັກວິຊາການທີ່ຂຶ້ນກັບກະຊວງ ແລະ ພະແນກຍຸຕິທຳແຂວງ, ນະຄອນຫຼວງ ແລະ ຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ ສະບັບເລກທີ 404/ນຍ, ລົງວັນທີ 23 ພະຈິກ 2007.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ